ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 233 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 23/04/2012

ເຖິງ: ຜູ້ອຳນວຍການທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ

ເລື່ອງ: ການເພີ່ມທະວີການຮັກສາຄວາມປອດໄພໃນການໃຫ້ບໍລິການຜ່ານຕູ້ເອທີເອັມ.

ໃນໄລຍະຜ່ານມາໄດ້ເກີດມີປະກົດການ ຄົນບໍ່ດີຈຳນວນໜຶ່ງ ໃຊ້ບັດປອມເພື່ອຖອນເງິນຈາກຕູ້ ATM ແລະ ໃຊ້ວິທີຕ່າງໆ ເພື່ອລັກເອົາລະຫັດບັດຜູ້ທີ່ໄປໃຊ້ບໍລິການຖອນເງິນຈາກຕູ້ ATM, ເພື່ອຫລີກເວັ້ນຄວາມເສຍຫາຍທີ່ອາດເກີດຂຶ້ນຕໍ່ທະນາຄານ ແລະ ຜູ້ໃຊ້ບໍລິການຜ່ານຕູ້ ATM, ກົມຄຸ້ມຄອງທະນາຄານທຸລະກິດຂໍແຈ້ງມາຍັງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດເພື່ອເພີ່ມທະວີການຮັກສາຄວາມປອດໄພໃນການໃຫ້ບໍລິການຜ່ານຕູ້ ATM ດັ່ງນີ້:

1. ໃຫ້ທະນາຄານເພີ່ມທະວີມາດຕະການປ້ອງກັນ ແລະ ຮັກສາຄວາມປອດໄພໃນການໃຫ້ບໍລິການຜ່ານຕູ້ ATM ດ້ວຍການຕິດຕັ້ງກ້ອງວົງຈອນປິດ, ຕິດຕາມການເຄື່ອນໄຫວໃຊ້ບໍລິການຜ່ານຕູ້ ATM ຢ່າງປົກກະຕິ ແລະ ສ້າງລະບົບແຈ້ງເຕືອນເຫດສຸກເສີນເມື່ອມີເຫດການບໍ່ດີເກີດຂຶ້ນ.
2. ສ້າງລະບົບປ້ອງກັນຂໍ້ມູນສຳລັບທະນາຄານທີ່ໃຫ້ບໍລິການບັດເອເລັກໂຕຼນິກທີ່ນຳໃຊ້ແຖບແມ່ເຫຼັກໃຫ້ປ່ຽນມານຳໃຊ້ແຜ່ນໄມໂຄຼຊິບແທນເພື່ອປ້ອງກັນການລັກເອົາຂໍ້ມູນຂອງລູກຄ້າ.
3. ລາຍງານໃຫ້ກົມຄຸ້ມຄອງທະນາຄານທຸລະກິດຊາບຢ່າງທັນການ ຫາກມີປະກົດການທີ່ບໍ່ດີເກີດຂຶ້ນຈາກການໃຊ້ບໍລິການຜ່ານຕູ້ ATM.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ**

ທະນາຄານ ແຫ່ງ ສ.ປ.ປ ລາວ
ກົມຄຸ້ມຄອງທະນາຄານທຸລະກິດ

ພຸດທະໄຊ ສີວິໄລ